# ບົດຂ່າວ

## ການຊ່ວຍເຫຼືອຜູ້ຫຼອດຊີວິດຈາກການຄ້າມະນຸດກັບຄືນສູ່ສັງຄົມຜ່ານປະເທດແມ່ນ້ຳຂອງ

ບາງກອກ, 7 ເມສາ 2017 - ມື້ນີ້ເຄື່ອງມືໃໝ່ໃນການສະໜັບສະໜູນການກັບຄືນສູ່ສັງຄົມຂອງຜູ້ຫຼອດຊີວິດຈາກການຄ້າມະນຸດໄດ້ຖືກເຜີຍແຜ່ນໂດຍ ສະຖາບັນ NEXUS, ໂຄງການສະຫະປະຊາຊາດເພື່ອການຮ່ວມມືຕ້ານການຄ້າມະນຸດ (UN-ACT) ແລະ ອົງການສຸພານິມິດ (World Vision). ປື້ມຄູ່ມື - *ສະໜັບສະໜູນການກັບສົ່ງກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍ: ຄູ່ມືສຳລັບອະນຸພາກພື້ນລຸ່ມແມ່ນ້ຳຂອງ* - ແມ່ນສຳລັບຜູ້ຈັດຕັ້ງປະຕິບັດຈາກພາກລັດຖະບານ ແລະອົງການທີ່ບໍ່ສັງກັດລັດຖະບານ, ເພື່ອແກ້ໄຂຈຸດອ່ອນໃນກອບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະການກັບຄືນສູ່ສັງຄົມໃນອານຸພາກພື້ນລຸ່ມແມ່ນ້ຳຂອງ (ປະເທດອານຸພາກພື້ນລຸ່ມແມ່ນ້ຳຂອງປະກອບມີ: ກຳປູເຈຍ, ສປຈີນ, ສປປ ລາວ, ມຽນມ້າ, ໄທ ແລະ ສສ ຫວຽດນາມ).

ປື້ມຄູ່ມືໄດ້ເນັ້ນກ່ຽວກັບຕົວຢ່າງບວກສຳລັບການສົ່ງກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ພ້ອມທັງຄວາມທ້າທາຍ ທີ່ຜູ້ຖືກເຄາະຮ້າຍຫຼາຍຄົນປະເຊີນໃນການອອກຈາກສະພາບການຂູດຮີດ. ນອກນີ້, ຄູ່ມືຍັງມີຄຳແນະນຳໃນການປະຕິບັດໃຫ້ກັບຜູ້ຈັດຕັ້ງປະຕິບັດຕົວຈິງ -ຜ່ານບົດລາຍງານ ແລະຂໍ້ແນະນຳຕ່າງໆ - ກ່ຽວກັບການປັບປຸງໂຄງການ ແລະນະໂຍບາຍການກັບຄືນສູ່ສັງຄົມແນວໃດ.

ຄູ່ມືແມ່ນອີງໃສ່ຜົນການສຳຫຼວດຈາກການສຶກສາພາກພື້ນ *ຫຼັງຈາກຖືກຄ້າມະນຸດ: ປະສົບການ ແລະຄວາມທ້າທາຍໃນການສົ່ງກັບຄືນສູ່ສັງຄົມຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນອານຸພາກພື້ນລຸ່ມແມ່ນ້ຳຂອງ.* ເຊິ່ງໄດ້ເຜີຍແຜ່ໃນປີ 2013 ໂດຍສະຖາບັນ NEXUS ແລະ ໂຄງການສະຫະປະຊາດເຄືອຂ່າຍຕ້ານການຄ້າມະນຸດ (UNIAP), ປັດຈຸບັນ (UN-ACT). ການສຶກສານີ້ອີງໃສ່ການສຳພາດທາງເລິກກັບຜູ້ຖືກເຄາະຮ້າຍ ຫຼາຍຮ້ອຍຄົນ ໃນປະເທດອານຸພາກພື້ນລຸ່ແມ່ນ້ຳຂອງ ແລະວິໃຈພາກປະຕິບັດທີດີຫຼາຍອັນ ແລະບົດຮຽນໂດຍກົງຈາກຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນພາກພື້ນ.

ທ່ານ ນາງ ຣິເປກກາ ເຊີທີ, ນັກສຳຫຼວດອາວຸໂສຈາກສະຖາບັນ NEXUS ແລະບັນນາທິການຂອງທັງສອງບົດລາຍງານການສຳຫຼວດ *ຫຼັງຈາກຖືກຄ້າມະນຸດ* ແລະຄູ່ມືທີ່ຕີພິມໃໝ່ ເວົ້າວ່າ, ”ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຫຼາຍກ່ວາ 250 ຄົນຈາກທົກປະເທດໄດ້ແລກປ່ຽນປະສົບການຕົວຈິງຂອງເຂົາເຈົ້າ ແລະສະທ້ອນຊີວິດການຄ້າມະນຸດຂອງເຂົາເຈົ້າ. ປື້ມຄູ່ມືນີ້ແມ່ນອີງໃສ່ປະສົບການສົ່ງກັບຄືນສູ່ສັງຄົມຂອງພວກເຂົາເຈົ້າ ແລະຄຳແນະນຳຂອງພວກເຂົາ ກ່ຽວກັບການສະໜັບສະໜູນການກັບຄືນສູ່ສັງຄົມຂອງຜູ້ເຄາະຮ້າຍໃຫ້ດີຂຶ້ນແນວໃດ”

ຄູ່ມືເຫຼັ້ມນີ້ໄດ້ມີການແປເປັນພາສາຫຼັກຂອງບັນດາປະເທດທີ່ໂຄງການຈັດຕັ້ງປະຕິບັດຢູ່. ຈະຖືກເຜີຍແຜ່ໃຫ້ກັບອົງການທີ່ກ່ຽວຂ້ອງ ແລະສະຖາບັນໃນພາກພື້ນເພື່ອສະໜັບສະໜູນວຽກງານຊ່ວຍເຫຼືອທີ່ດຳເນີນຢູ່ຂອງພວກເຂົາ. ເອມີ ໂຄນລິນ, ຜູ້ປະສານງານແຜນງານພາກພື້ນຂອງອົງການສຸພານິມິດ ການສິ້ນສຸດການທາລຸນເດັກນ້ອຍ (EVAC) ໂຄງການພາກພື້ນອາຊີຕາເວັນອອກໄດ້ເນັ້ນເຖິງຄວາມສຳຄັນຂອງການຈັດຕັ້ງປະຕິບັດຄູ່ມືສະບັບນີ້ໃນປື້ມຄູ່ມືເພື່ອປັບປຸງຄວາມພະຍາຍາມການສົ່ງກັບຄືນສູ່ສັງຄົມ: ”ອົງການສຸພານິມິດ, ກັບໂຄງການພື້ນຖານໂຄງລ່າງພວກເຮົາໃນປະເທດເຫຼົ່ານີ້ໃນການແກ້ໄຂການຄ້າມະນຸດ ຈາກນະໂຍບາຍ, ການໂຄສະນາເຜີຍແຜ່ ແລະການຈັດຕັ້ງປະຕິບັດ, ພ້ອມທີ່ຈະສະໜັບສະໜູນຄວາມພະຍາຍາມນີ້.”

ທັງ ການສຶກສາ *ຫຼັງຈາກຖືກຄ້າມະນຸດ* ແລະຄູ່ມືການກັບຄືນສູ່ສັງຄົມ ແມ່ນຕົວຢ່າງທີ່ດີຂອງການຮ່ວມມືພາກພື້ນຜ່ານການປະສານງານລະດັບລັດຖະມົນຕີໃນພາກພື້ນແມ່ນ້ຳຂອງຕ້ານການຄ້າມະນຸດ (COMMIT). ຄອມມິດແມ່ນກົນໄກສຳລັບ ການຮ່ວມມືສອງຝ່າຍ ແລະຫຼາຍຝ່າຍຕ້ານການຄ້າມະນຸດ ຢູ່ບົນພື້ນຖານບົດບັນທຶກຄວາມເຂົ້າໃຈ ປີ 2004 ລະຫວ່າງຫົກປະເທດອານຸພາກພື້ນລຸ່ມແມ່ນ້ຳຂອງ. ໂຄງການສະຫະປະຊາດເພື່ອການຮ່ວມມືຕ້ານການຄ້າມະນຸດ (UN-ACT) ແລະໂຄງການກົ້ກເຄົ້າ, UNIAP, ໄດ້

ເຮັດໜ້າທີເປັນກອງເລຂາໃຫ້ກັບຂະບວນການຄອມມິດຕັ້ງແຕ່ກໍ່ຕັ້ງມາ.

ທ່ານ ນາງ ກາໂອຣິ ກາວາຣາປາຍາຊີ, ຜູ້ອຳນວຍການພາກພື້ນຂອງໂຄງການ UN-ACT ໄດ້ເນັ້ນເຖິງພາລະບົດບາດທີ່ສຳຄັນຂອງຂະບວນການຄອມມິດໃນການປັບປຸງການຕອບສະໜອງການສົ່ງກັບຄືນສູ່ສັງຄົມ: "ການສຶກສາວິໃຈໄດ້ດຳເນີນໃນຈຸດພິເສດຂອງພາກພື້ນ ທັງແນວຄວາມຄິດທີ່ລິເລີ່ມການກັບຄືນສູ່ສັງຄົມ ແມ່ນຮັບຮອງໂດຍລັດຖະບານຄອມມິດ. ຂອບໃຈຕໍ່ກອບການເຮັດວຽກຂອງຄອມມິດທີ່ເຮັດໃຫ້ພວກເຮົາສາມາດເຜີຍແຜ່ຫຼັກຖານທີ່ອຸດົມສົມບູນ ສາມດແຈ້ງກ່ຽວກັບການສຶກສານີ້ ແລະຄູ່ມືນີ້, ແລະປັດຈຸບັນພວກເຮົາມີພາລະບົດບາດໃນການດຳເນີນງານປັບປຸງນະໂຍບາຍ ແລະແຜນງານກ່ຽວກັບການສົ່ງກັບຄືນສູ່ສັງຄົມຜ່ານອານຸພາກພື້ນ, ທີ່ໄດ້ມາດຖານສາກົນ."

ຈົບ

***

ເຂົ້າເຖິງປື້ມຄູ່ມື, ກົດ here.
ເພື່ອ ດາວໂລດ ບົດລາຍງານການສຳຫຼວດ *ຫຼັງຖືກຄ້າມະນຸດ* , ກົດ here.


ສຳລັບຂໍ້ມູນເພີ່ມເຕີມສຳລັບການສຳພາດ, ກະລຸນາຕິດຕໍ່:
ສະຖາບັນ NEXUS : Ms. Rebecca Surtees, Senior Researcher, rsurtees@nexusinstitute.net
ໂຄງການ UN-ACT: Mr. Sebastian Boll, Regional Research Specialist, sebastian.boll@undp.org
ອົງການສຸພານິມິດ: Ms. Amy Collins, Regional Programme Coordinator, amy_collins@wvi.org